# ວັດລາວເວລຸວະນາຣາມ ແຂວງອອນຕາຣີໂອ

## Wat Lao Veluwanaram of Ontario

Non-Profit and Charitable Organization Charity's BN: 88660 5278 RR0001
17969 Airport Rd., Caledon East, Ontario, Canada L7K 2K1
Tel: 905-584-6886    WEB SITE: www.watlao-veluwanh.org


---

ວັນອາທິດ ທີ ໑໐ ເດືອນ ພຶສະພາ ພສ ໒໕໖໔

ຫົວຂໍ້:    ຂໍ ແຜ່ ປັດຈັຍ ອຸປະຖັມ ວັດລາວເວລຸວະນາຣາມ ແຂວງອອນຕາຣີໂອ

ອາດຕະມາພາບ ຍາທ່ານ ຄຳໂຈມ ແກ້ວມະນີ ເຈົ້າອະທິການ ວັດລາວເວລຸວັນ ພ້ອມຄະນະສົງຄ໌ ຄະນະກັມການອຸປຖັມ ຄະນະພຸທສຕຣີ ແລະ ຄະນະປຶກສາອະວຸໂສ ຂໍຈະເຣີນພອນ ມາຍັງອອກຕົນຍາດໂຍມ. ອາດຕະມາ ມີຈຸດປະສົງ ຂໍຂ່າວ ໄຫ້ ຍາດ ພີ່ນ້ອງ ລູກຫລານ ໄຫ້ຮັບຊາບ ອີກວ່າ ເພື່ອຫລີກລ້ຽງ ການແຜ່ລະບາດ ເຊື້ອໂຣກ **COVID-19** ທີ່ ວັດລາວເວລຸວັນ ກໍ ໄດ້ ຍົກເລີກ ງານບຸນ ຕັກບາດ ປະຈຳເດືອນ ງານຫາລາຍໄດ້ ຕ່າງໆ ຕັ້ງແຕ່ຕົ້ນປີ ແລະ ກໍຫ້າມງານສ່ວນຕົວ ບໍ່ໄຫ້ ຈັດທີ່ວັດ ຕັ້ງແຕ່ ທາງການ ແຂວງ ອອນຕາຣີໂອ ຫ້າມການຈັດຮ່ວມກຸ່ມຂອງງານຕ່າງໆ ແລະ ທາງວັດ ກໍຈະສືບຕໍ່ ປິດງານບຸນຕັກບາດ ເຫລົ່ານັ້ນ ຈົນເຖິງ ທາງການ ອະນຸຍາດ ໄຫ້ທຳພິທີ ໄດ້. ເພາະເຫດນີ້ ທາງວັດ ຂາດລາຍຮັບອຸປຖັມ ແລະ ເໝືອນຄອບຄົວ ທ່ານ ທາງວັດ ກໍມີ **Bills** ທີ່ຕ້ອງ ໄດ້ຈ່າຍ ປະຈຳເດືອນ.

ເພາະສນັ້ນແລ້ວ ອາດຕະມາ ຂໍແຜ່ ປັດຈັຍ ມາຍັງລູກຫລານ ໄຫ້ສືບຕໍ່ ອຸປະຖັມ ວັດລາວເວລຸວັນ ຕລອດໄປ.

ການອຸປຖັມ ນີ້ ກໍແລ້ວແຕ່ຄວາມສດວກ ເຊັ່ນ ສົ່ງ Cheque payable to Wat Lao Veluwanaram of Ontario ຫລື ອຸປຖັມປະຈຳເດືອນ ດ້ວຍການອະນຸຍາດໄຫ້ທາງວັດ ຕັດເອົາເງີນ ຈາກບັນຊີ ທະນາຄານ ໂດຍຕົງ ກໍເປັນການດີ ເພື່ອຄວາມສດວກ.

ອາດຕະມາ ພ້ອມຄະນະສົງຄ໌ ຄະນະກັມການອຸປຖັມ ຄະນະພຸທສຕຣີ ແລະ ຄະນະປຶກສາອະວຸໂສ ຂໍຖື ໂອກາດນີ້ ຂອບໃຈ ມາຍັງ ຄອບຄົວທີ່ໄດ້ ອຸປຖັມບຳລຸງວັດ ປະຈຳເດືອນ ມາແລ້ວ.

ພ້ອມນີ້ ອາດຕະມາພາບ ຂໍ ອວຍພອນໄຊຍ໌ ດ້ວຍອຳນາດ ຂອງ ຄຸນພຣະພຸທ ຄຸນພຣະທັມ ຄຸນພຣະສົງຄ໌ ຈົ່ງໄດ້ມາຄຸ້ມຄອງ ປົກປັກ ຮັກສາທ່ານ ແລະ ຄອບຄົວ ຈົ່ງປະສົບ ແຕ່ສິ່ງທີ່ດີ ສິ່ງທີ່ເປັນ ມົງຄົລ ອາຍຸ ວັນນະ ສຸກຂະ ພາລະ ປົດສະຈາກ ມານຮ້າຍ ແລະ ຫ່າງໄກ ເຊື້ອໂຣກຮ້າຍ ທັງຫລາຍທັງປວງ ແລະ ມີຜົນສຳເລັດ ໃນກິຈກັມການງານ ທຸກເມື່ອ ຕລອດໄປ ແລະ ຕລອດການ ດ້ວຍເຖີ້ນ.

ຈະເຣີນພອນ,

ຍາທ່ານ ຄຳໂຈມ ແກ້ວມະນີ – ເຈົ້າອະທິການ ວັດລາວເວລຸວະນາຣາມ ແຂວງອອນຕາຣີໂອ

c/c ວິໄລສິດ ຊານຸບານ – ປະທານຄະນະກັມການອຸປຖັມ

ເຊີນເຂົ້າເບິ່ງ **Website: watlao-veluwanh.org** ຂອງວັດລາວເວລຸວັນ ເພື່ອ ຂ່າວ ຕ່າງໆ ແລະ ບັນທຶກຮູບພາບສ່ວນນຶ່ງໃນອາດີດ.